# ສິດທິເດັກໃນການມີສະພາບແວດລ້ອມ ທີ່ດີຕໍ່ສຸຂະພາບໃນພາກພື້ນອາຊຽນ

## ບັນດາຫຼັກການ ແລະ ແນວທາງນະໂຍບາຍ








**ສິດທິເດັກແມ່ນຫັຍງ?** ສິດທິເດັກແມ່ນສິ່ງທີ່ເດັກທຸກຄົນຄວນມີ ຫຼື ສາມາດເຮັດໄດ້ເພື່ອໃຫ້ມີຊີວິດທີ່ດີ. ສິດທິເດັກປະກອບມີສິດທິການມີຄວາມປອດໄພ ແລະ ມີບ່ອນດຳລົງຊີວິດທີ່ປອດໄພ, ສິດທິໃນການສຶກສາ, ແລະ ສິດທິໃນການເວົ້າເພື່ອຕັດສິນໃຈໃນສິ່ງທີ່ມີຜົນກະທົບຕໍ່ຕົນເອງ. ໃນຂໍ້ຕົກລົງທີ່ສຳຄັນ, ລັດຖະບານໄດ້ສັນຍາວ່າຈະຮັບປະກັນໃຫ້ສິດທິເດັກເຫຼົ່ານີ້ໄດ້ຮັບການປົກປ້ອງ.

## ສະພາບແວດລ້ອມທີ່ດີຕໍ່ສຸຂະພາບແມ່ນຫັຍງ?



ມີສະພາບອາກາດທີ່ປອດໄພ ສຳລັບທຸກຄົນ ແລະ ທຸກສິ່ງທຸກຢ່າງທີ່ມີຊີວິດ

ມີອາຫານການກິນທີ່ດີ ແລະ ມີສະຖານທີ່ຕ່າງໆທີ່ບໍ່ມີມົນລະພິດເພື່ອດຳລົງຊີວິດຢູ່, ເພື່ອສຶກສາຮ່ຳຮຽນ, ແລະ ເພື່ອຫຼິ້ນ



ມີອາກາດຫາຍໃຈທີ່ສະອາດ ແລະ ມີນ້ຳດື່ມສະອາດ





ການດຳເນີນການແບບຍືນຍົງເພື່ອນຳໃຊ້ຊັບພະຍາກອນທີ່ມີຢູ່ໃນປະຈຸບັນໃຫ້ໄດ້ຫຼາຍທີ່ສຸດໂດຍບໍ່ເປັນອັນຕະລາຍຕໍ່ສິ່ງເຫຼົ່ານັ້ນໃນຕໍ່ໜ້າ







## ເດັກທົ່ວໂລກພວມບອກຜູ້ໃຫຍ່ ແລະ ລັດຖະບານວ່າພວກເຂົາຢາກດໍາລົງຊີວິດ ແລະ ເຕີບໃຫຍ່ໃນສະພາບແວດລ້ອມທີ່ດີຕໍ່ສຸຂະພາບ.

ເພື່ອຊ່ວຍໃຫ້ທຸກຄົນໃນພາກພື້ນອາຊຽນປົກປ້ອງ ແລະ ເຄົາລົບສິດທິເດັກຕໍ່ສະພາບແວດລ້ອມທີ່ດີຕໍ່ສຸຂະພາບ, 3 ອົງການສະຫະປະຊາຊາດໄດ້ເຮັດວຽກຮ່ວມກັບບັນດາຊ່ຽວຊານດ້ານເດັກ ແລະ ຜູ້ໃຫຍ່ເພື່ອສ້າງບັນດາຫຼັກການ ແລະ ແນວທາງນະໂຍບາຍ.

UN environment programme · unicef for every child · United Nations Human Rights, Office of the High Commissioner, South-East Asia Regional Office



# ບັນດາຫຼັກການ ແລະ ແນວທາງນະໂຍບາຍມີຄືແນວໃດ?

**ບັນດາຫຼັກການ** ແມ່ນກົດລະບຽບຂັ້ນພື້ນຖານທີ່ທຸກຄົນຕ້ອງປະຕິບັດເພື່ອຮັບປະກັນວ່າເດັກສາມາດມີສິດທິຂອງຕົນໃນສະພາບແວດລ້ອມທີ່ດີຕໍ່ສຸຂະພາບ. ມີທັງໝົດ 37 ຫຼັກການ.

**ແນວທາງນະໂຍບາຍ** ໃຫ້ທິດທາງແກ່ລັດຖະບານ, ພາກທຸລະກິດ, ຊຸມຊົນ, ສື່, ແລະ ເດັກກ່ຽວກັບວິທີການປະຕິບັດຕາມຫຼັກການ.




## ທ່ານຮູ້ບໍ?

ສະຫະປະຊາຊາດບອກວ່າເດັກແມ່ນຜູ້ທີ່ມີອາຍຸຕັ້ງແຕ່ເກີດຈົນຮອດອາຍຸ 18 ປີ, ເມື່ອພວກເຂົາກາຍເປັນໄວໜຸ່ມ.



# ບັນດາຫຼັກການ

ສິ່ງທີ່ທຸກຄົນໃນພາກພື້ນອາຊຽນຄວນຈື່ໄວ້ໃນເວລາຕັດສິນໃຈ ແລະ ດຳເນີນການໃດກໍຕາມທີ່ສົ່ງຜົນກະທົບຕໍ່ເດັກ ແລະ ສິ່ງແວດລ້ອມ ມີຫັຍງແດ່?




**ສະພາບແວດລ້ອມທີ່ດີຕໍ່ສຸຂະພາບ**
ເດັກທຸກຄົນມີສິດທິໃນການດຳລົງຊີວິດ ແລະ ເຕີບໃຫຍ່ໃນສະພາບແວດລ້ອມທີ່ດີຕໍ່ສຸຂະພາບ.




**ການມີສ່ວນຮ່ວມຂອງເດັກ**
ເດັກທຸກຄົນມີສິດທິໃນການແບ່ງປັນທັດສະນະຂອງຕົນເອງ ແລະ ມີສ່ວນຮ່ວມໃນການຕັດສິນໃຈທີ່ມີຜົນກະທົບຕໍ່ເດັກ ແລະ ສິດທິຂອງພວກເຂົາຕໍ່ສະພາບແວດລ້ອມທີ່ດີຕໍ່ສຸຂະພາບ.




**ຂໍ້ມູນທີ່ເປັນມິດຕໍ່ເດັກ**
ເດັກທຸກຄົນມີສິດທິໃນການຮັບຂໍ້ມູນກ່ຽວກັບການດຳລົງຊີວິດໃນສະພາບແວດລ້ອມທີ່ດີຕໍ່ສຸຂະພາບໃນພາສາທີ່ພວກເຂົາເຂົ້າໃຈ ແລະ ໃນວິທີການທີ່ໜ້າສົນໃຈຕໍ່ພວກເຂົາ.




**ການສຶກສາດ້ານສິ່ງແວດລ້ອມ**
ເດັກທຸກຄົນມີສິດທິໃນການຮຽນຮູ້ກ່ຽວກັບສິ່ງແວດລ້ອມ ແລະ ວິທີການປົກປ້ອງສິ່ງແວດລ້ອມ.




**ການຫຼິ້ນ**
ເດັກທຸກຄົນມີສິດທິໃນການຫຼິ້ນຢູ່ນອກເຮືອນຢ່າງປອດໄພໃນສະພາບແວດລ້ອມທີ່ດີຕໍ່ສຸຂະພາບ




**ການປົກປ້ອງຈາກການປ່ຽນແປງຂອງດິນຟ້າອາກາດ ແລະ ຄວາມເສຍຫາຍຕໍ່ສະພາບແວດລ້ອມທຳມະຊາດ**
ເດັກທຸກຄົນມີສິດທິໄດ້ຮັບການປົກປ້ອງຈາກຄວາມເສຍຫາຍທຸກປະເພດທີ່ເກີດຈາກການປ່ຽນແປງດິນຟ້າອາກາດ, ມົນລະພິດ ແລະ ການສູນເສຍພືດພັນ, ສັດ, ແລະ ຊັບພະຍາກອນທຳມະຊາດອື່ນໆ.




**ຍຸດຕິກິດຈະກຳທຸລະກິດທີ່ເປັນອັນຕະລາຍ**
ເດັກທຸກຄົນມີສິດທິໄດ້ຮັບການປົກປ້ອງຈາກຄວາມເສຍຫາຍທຸກປະເພດທີ່ເກີດຈາກກິດຈະກຳທຸລະກິດ.




**ການສ້າງໃຫ້ມີການຊ່ວຍເຫຼືອ**
ເດັກທຸກຄົນມີສິດທິໃນການຮ້ອງຂໍ ແລະ ໄດ້ຮັບການສະໜັບສະໜູນ ແລະ ໄດ້ຮັບຄວາມຍຸຕິທຳທີ່ເປັນມິດກັບເດັກໃນເວລາພວກເຂົາປະສົບໄພອັນຕະລາຍທີ່ເກີດຈາກການລະເມີດສິດທິຂອງຕົນຕໍ່ສະພາບແວດລ້ອມທີ່ດີຕໍ່ສຸຂະພາບ.




**ການປົກປ້ອງຈາກຄວາມຮຸນແຮງ**
ເດັກທຸກຄົນມີສິດທິໄດ້ຮັບການປົກປ້ອງຈາກໄພຂົ່ມຂູ່ ຫຼື ບັນຫາຕ່າງໆບໍ່ວ່າຈາກໃຜກໍຕາມ, ເມື່ອພວກເຂົາຮຽກຮ້ອງໃຫ້ມີການເຄົາລົບສິດທິຂອງຕົນຕໍ່ສະພາບແວດລ້ອມທີ່ດີຕໍ່ສຸຂະພາບ ແລະ ເມື່ອພວກເຂົາຊອກຫາຄວາມຍຸຕິທຳ ຖ້າສິດທິຂອງພວກເຂົາບໍ່ໄດ້ຮັບຄວາມເຄົາລົບ.

ມີ 28 ຫຼັກການສະເພາະອື່ນອີກກ່ຽວກັບ ການປົກປ້ອງສິດທິເດັກຕໍ່ສະພາບແວດລ້ອມ ທີ່ດີຕໍ່ສຸຂະພາບ.

**ຈົ່ງຈື່!** ນີ້ແມ່ນສຳລັບເດັກທຸກຄົນ. ບໍ່ສຳຄັນວ່າເຈົ້າແມ່ນໃຜ ຫຼື ຢູ່ໃສ. ເດັກທຸກຄົນມີສິດທິເຫຼົ່ານີ້, ລວມທັງເຈົ້າເອງ.

# ແນວທາງ ນະໂຍບາຍ

ໝົດທຸກຄົນສາມາດປະກອບສ່ວນເພື່ອຮັບປະກັນໃຫ້ມີສະພາບແວດລ້ອມ ທີ່ດີຕໍ່ສຸຂະພາບສຳລັບເດັກໄດ້ຄືແນວໃດ?

## ລັດຖະບານສາມາດ...



- ສ້າງກົດໝາຍ ແລະ ກົດລະບຽບຕ່າງໆທີ່ຮຽກຮ້ອງໃຫ້ມີຄວາມເຄົາລົບຕໍ່ຫຼັກການເຫຼົ່ານີ້, ລວມທັງກົດລະບຽບສຳລັບທຸລະກິດ
- ຮັບປະກັນວ່າເດັກມີສ່ວນຮ່ວມໃນການຕັດສິນໃຈ,ດ້ວຍຂໍ້ມູນທີ່ພວກເຂົາສາມາດເຂົ້າໃຈໄດ້
  ຮັບປະກັນວ່າໂຮງຮຽນສະໜອງການສຶກສາກ່ຽວກັບສິ່ງແວດລ້ອມ
- ຮັບປະກັນວ່າໃຫ້ເງິນພຽງພໍເພື່ອໃຫ້ການດຳເນີນການທັງໝົດເຫຼົ່ານີ້ສາມາດເປັນໄປໄດ້ເພື່ອປົກປ້ອງ
- ສິດທິເດັກຕໍ່ການມີສະພາບແວດລ້ອມທີ່ດີຕໍ່ສຸຂະພາບ

## ພາກທຸລະກິດ ສາມາດ ...



- ກວດກາຕະຫຼອດເວລາເພື່ອເບິ່ງວ່າກິດຈະກຳທຸລະກິດສາມາດສົ່ງຜົນກະທົບຕໍ່ເດັກ ແລະ ສິ່ງແວດລ້ອມຄືແນວໃດ, ແລະ ຫຼີກເວັ້ນກິດຈະກຳທີ່ເຮັດໃຫ້ເກີດອັນຕະລາຍ
- ຮັບປະກັນວ່າທຸກຄົນໃນບໍລິສັດເຂົ້າໃຈ ແລະ ເຄົາລົບສິດທິເດັກກ່ຽວກັບການມີສະພາບແວດລ້ອມທີ່ດີຕໍ່ສຸຂະພາບ
- ຮັບຟັງສຽງຂອງເດັກກ່ອນທີ່ຈະຕັດສິນໃຈດ້ານທຸລະກິດ

## ຊຸມຊົນສາມາດ...



- ຊ່ວຍເຫຼືອເດັກເພື່ອປົກປ້ອງສິດທິຂອງຕົນໃນການມີສະພາບແວດລ້ອມທີ່ດີຕໍ່ສຸຂະພາບ ໃນວິທີການທີ່ປອດໄພ
- ເຮັດວຽກກັບເດັກເພື່ອແນະນຳການປະຕິບັດຕົວຈິງທີ່ດີຕໍ່ສະພາບແວດລ້ອມທີ່ພວກເຂົາອາໄສຢູ່ ເຊັ່ນ: 'ຫຼຸດຜ່ອນ-ນຳມາໃຊ້ຄືນໃໝ່-ໝູນໃຊ້'
- ສະໜັບສະໜູນລັດຖະບານ, ໂຮງຮຽນ, ທຸລະກິດ, ແລະ ຊຸມຊົນໃຫ້ເຄົາລົບຕໍ່ບັນດາຫຼັກການເຫຼົ່ານີ້

## ສື່ສາມາດ...




- ລາຍງານສິ່ງທີ່ລັດຖະບານ ແລະ ທຸລະກິດເຮັດໄດ້ດີ ແລະ ຍັງບໍ່ທັນໄດ້ດີໃນການເຄົາລົບສິດທິເດັກຕໍ່ການມີສະພາບແວດລ້ອມທີ່ດີຕໍ່ສຸຂະພາບ
- ຜະລິດຂໍ້ມູນຂ່າວສານກ່ຽວກັບສິ່ງແວດລ້ອມສຳລັບເດັກ
- ລາຍງານບັນດາກິດຈະກຳທີ່ດີທີ່ຈັດໂດຍເດັກເພື່ອປົກປັກຮັກສາສິ່ງແວດລ້ອມ ແລະ ຕໍ່ສູ້ກັບການປ່ຽນແປງດິນຟ້າອາກາດ

ອັນນີ້ພຽງແຕ່ເປັນບັນຊີລາຍຊື່ສັ້ນໆໃນສິ່ງທີ່ພໍ່ແມ່, ຄູອາຈານ, ແລະ ຜູ້ໃຫຍ່ອື່ນໆສາມາດເຮັດໄດ້. ພວກເຂົາສາມາດເຮັດໄດ້ຫຼາຍກວ່ານັ້ນເພື່ອໃຫ້ເດັກໄດ້ດຳລົງຊີວິດ ແລະ ເຕີບໃຫຍ່ໃນສະພາບແວດລ້ອມທີ່ດີຕໍ່ສຸຂະພາບ.



# ເດັກສາມາດເຮັດຫຍັງໄດ້ແດ່ ?

## ຮຽນຮູ້



ໃນໂຮງຮຽນ - ຈົ່ງບອກຄູ ແລະ ພໍ່ແມ່ຂອງເຈົ້າວ່າ ເຈົ້າຢາກຮຽນຮູ້ກ່ຽວກັບສິ່ງແວດລ້ອມ ແລະ ສິດທິເດັກຕໍ່ສະພາບແວດລ້ອມທີ່ດີຕໍ່ສຸຂະພາບ



ດ້ວຍຕົວເອງ - ຈົ່ງອ່ານປຶ້ມ, ເບິ່ງວິດີໂອ, ແລະ ມີສ່ວນຮ່ວມ ໃນກິດຈະກຳທີ່ສອນເຈົ້າກ່ຽວກັບສິ່ງແວດລ້ອມ

## ເວົ້າລົມ



ຈົ່ງບອກເດັກ ແລະ ຜູ້ໃຫຍ່ຄົນອື່ນໆ, ລວມທັງພໍ່ແມ່ຂອງເຈົ້າ, ສິ່ງທີ່ເຈົ້າໄດ້ຮຽນຮູ້ກ່ຽວກັບສິ່ງແວດລ້ອມ ແລະ ສິດທິເດັກຕໍ່ກັບສະພາບແວດລ້ອມທີ່ດີຕໍ່ສຸຂະພາບ



ຈົ່ງໃຊ້ສື່ສັງຄົມເພື່ອບອກຄົນອື່ນວ່າເຈົ້າພວມເຮັດຫຍັງ ເພື່ອປົກປ້ອງສິ່ງແວດລ້ອມ



ຈົ່ງບອກຄູຂອງເຈົ້າໃຫ້ຮູ້ວ່າເຈົ້າຕ້ອງການຂໍ້ມູນຂ່າວສານທີ່ເປັນມິດກັບເດັກກ່ຽວກັບສິ່ງແວດລ້ອມ ແລະ ການປ່ຽນແປງດິນຟ້າອາກາດ



## ຫຼິ້ນມ່ວນ





ຈົ່ງບອກພໍ່ແມ່ຂອງເຈົ້າ ແລະ ຜູ້ໃຫຍ່ຄົນອື່ນວ່າ ເດັກຢາກມີບ່ອນຫຼິ້ນທີ່ປອດໄພ

ຈົ່ງຊອກຫາສິ່ງທີ່ຕ້ອງເຮັດເພື່ອປົກປ້ອງສິ່ງແວດລ້ອມ ແລະ ກໍມີຄວາມມ່ວນຄືກັນ

## ເຂົ້າຮ່ວມ





ຈົ່ງຊ່ວຍສ້າງກຸ່ມຄົນຕ່າງໆໃນຊຸມຊົນຂອງເຈົ້າ ແລະ ມີສ່ວນຮ່ວມໃນເຄືອຂ່າຍທີ່ມີຢູ່ແລ້ວສຳລັບເດັກທີ່ເຮັດວຽກເພື່ອປົກປ້ອງສິ່ງແວດລ້ອມ ແລະ ຕໍ່ສູ້ກັບການປ່ຽນແປງດິນຟ້າອາກາດ.

ມີສ່ວນຮ່ວມໃນຂະບວນການໂຄສະນາຂອງພາກພື້ນ ແລະ ສາກົນ ແລະ ກຸ່ມຕ່າງໆ:

- ຂໍ້ລິເລີ່ມສິດທິເດັກດ້ານສິ່ງແວດລ້ອມ (CERI)
- ອົງການຊາວໜຸ່ມອາຊຽນ
- ກຸ່ມໃຫຍ່ຂອງອົງການສະຫະປະຊາຊາດກ່ຽວກັບເດັກ ແລະ ຊາວໜຸ່ມ
- ຄະນະຊາວໜຸ່ມພາກພື້ນອາຊີປາຊີຟິກ
- ກຸ່ມໃຫຍ່ຂອງ UNEP ກ່ຽວກັບເດັກ ແລະ ຊາວໜຸ່ມ



# ໂຄສະນາສົ່ງເສີມ





ຈົ່ງບອກພໍ່ແມ່ຂອງເຈົ້າ, ຄູຂອງເຈົ້າ, ແລະ ຜູ້ນໍາໃນຊຸມຊົນຂອງເຈົ້າວ່າເດັກຄວນມີສ່ວນຮ່ວມໃນການຕັດສິນໃຈທີ່ ມີຜົນກະທົບຕໍ່ສິດທິຂອງພວກເຂົາຕໍ່ສະພາບແວດລ້ອມ ທີ່ດີຕໍ່ສຸຂະພາບ.

ກວດເບິ່ງທຸກຜົນກະທົບຕໍ່ສະພາບແວດລ້ອມທີ່ເຈົ້າອາໄສຢູ່ ແລະ ມັນມີຜົນກະທົບແນວໃດຕໍ່ຄົນອ້ອມຂ້າງເຈົ້າ




ເມື່ອສິດທິຂອງເຈົ້າຕໍ່ສະພາບແວດລ້ອມທີ່ດີຕໍ່ສຸຂະພາບບໍ່ໄດ້ຮັບຄວາມເຄົາລົບ, ຂໍໃຫ້ກຸ່ມທີ່ເຈົ້າໄດ້ເຂົ້າຮ່ວມຊ່ວຍເຫຼືອເຈົ້າເພື່ອຮ້ອງທຸກ



**ສົນທິສັນຍາວ່າດ້ວຍສິດທິເດັກຂອງອົງການສະຫະປະຊາຊາດ** ແມ່ນຂໍ້ຕົກລົງສຳຄັນຂອງບັນດາປະເທດທີ່ໄດ້ສັນຍາວ່າຈະປົກປ້ອງສິດທິເດັກ. ສົນທິສັນຍາວ່າດ້ວຍສິດທິເດັກອະທິບາຍວ່າເດັກແມ່ນໃຜ, ສິດທິທັງໝົດຂອງພວກເຂົາ, ແລະ ຄວາມຮັບຜິດຊອບຂອງລັດຖະບານບັນດາປະ ເທດຕ່າງໆ. ສິດທິທັງໝົດແມ່ນເຊື່ອມໂຍງກັນ, ມີຄວາມສຳຄັນເທົ່າທຽມກັນ, ແລະ ບໍ່ສາມາດແຍກອອກໄປຈາກເດັກໄດ້. ລັດຖະບານຂອງບັນດາປະເທດໃນພາກພື້ນອາຊຽນໄດ້ເຫັນດີເປັນເອກະສັນກັບສົນທິສັນຍາວ່າດ້ວຍສິດທິເດັກ.

ຄວາມຍຸຕິທຳທີ່ເປັນມິດຕໍ່ເດັກແມ່ນວິທີການສູ່
ຄວາມຍຸຕິທຳທີ່ເຄົາລົບສິດທິຂອງເຈົ້າໃນຖານະເປັນເດັກ, ໃນວິທີທີ່ຄຳນຶງ ເຖິງ ແລະ ປັບຕົວເຂົ້າກັບອາຍຸ, ຄວາມຕ້ອງການຂອງເຈົ້າ, ສະຖານະການຂອງເຈົ້າ, ແລະ ເຈົ້າເຂົ້າໃຈໄດ້ຫຼາຍປານໃດ. ເປັນ ຄວາມຍຸຕິທຳທີ່ເດັກທຸກຄົນສາມາດເຂົ້າເຖິງໄດ້ຊຶ່ງມີຄວາມວ່ອງໄວ ແລະ ໃຫ້ຄຸນຄ່າຕໍ່ສຽງຂອງເຈົ້າຕະຫຼອດທຸກຂັ້ນຕອນ. ໄດ້ອອກແບບຄວາມຍຸຕິທຳທີ່ເປັນມິດກັບເດັກເພື່ອຫຼຸດຜ່ອນຄວາມເສຍຫາຍທີ່ເຈົ້າອາດຈະປະສົບໃນຂັ້ນຕອນດັ່ງກ່າວ ແລະ ຊ່ວຍເຈົ້າໃຫ້ປົກປ້ອງສິດທິຂອງຕົນ.

# ຄຳຂອບໃຈ

ຂໍ້ມູນຫຍໍ້ແບບເປັນມິດກັບເດັກນີ້ກ່ຽວກັບ *ບັນດາຫຼັກການ ແລະ ແນວທາງນະໂຍບາຍ: ສິດທິເດັກຕໍ່ຄວາມປອດໄພ, ສະພາບແວດລ້ອມທີ່ສະອາດ, ມີຜົນດີຕໍ່ສຸຂະພາບ ແລະ ມີຄວາມຍືນຍົງໃນພາກພື້ນອາຊຽນ* ໄດ້ຮັບການຜະລິດດ້ວຍການເປັນຄູ່ຮ່ວມງານກັບເດັກອາຍຸ 14-18 ປີ ຈາກປະເທດບຣູໄນ ດາຣູຊາລາມ, ກຳປູເຈຍ, ອິນໂດເນເຊຍ, ສປປ ລາວ, ມາເລເຊຍ, ມຽນມາ, ຟີລິບປິນ, ສິງກະໂປ, ໄທ, ແລະ ຫວຽດນາມ.

ອອກແບບ/ຜະລິດໂດຍ: QUO ບາງກອກ

ໄດ້ສຳເລັດຂໍ້ມູນຫຍໍ້ທີ່ເປັນມິດກັບເດັກໃນເດືອນພະຈິກ ປີ 2021. ອົງການ UNEP, UNICEF, ອົງການ ສິດທິມະນຸດຂອງສປຊ, ແລະ ພັນທະມິດສິດທິເດັກອາຊີບໍ່ຮັບຜິດຊອບຕໍ່ຜົນສະທ້ອນອັນເນື່ອງມາຈາກການ ນຳໃຊ້ສິ່ງພິມນີ້ຄືນໃໝ່.

ສະໜັບສະໜູນການແປເປັນພາສາລາວໂດຍອົງການ terre des hommes ປະເທດເຢຍລະມັນ

ມີຄຳຖາມບໍ? ປ່ອນຕິດຕໍ່ພົວພັນ:

**ໂຄງການສິ່ງແວດລ້ອມຂອງສະຫະປະຊາຊາດ (UNEP)**
uneproap@un.org

**ກອງທຶນເດັກສະຫະປະຊາຊາດ (UNICEF)**
asiapacificinfo@unicef.org

**ອົງການສິດທິມະນຸດສະຫະປະຊາຊາດ (OHCHR)**
ohchr.bangkok@un.org

**ກຸ່ມພັນທະມິດສິດທິເດັກອາຊີ (CRC Asia)**
secretariat@crcasia.org
**ອົງການ terre des hommes ປະເທດເຢຍລະມັນປະຈຳພາກພື້ນອາຊີຕາເວັນອອກສ່ຽງໃຕ້**
info@tdhgsea.org

UN environment programme 50 1972-2022 · UNITED NATIONS HUMAN RIGHTS OFFICE OF THE HIGH COMMISSIONER South-East Asia Regional Office · unicef for every child · Child Rights Coalition Asia · terre des hommes Help for Children in Need